ກະຊວງແຜນການ ແລະ ການລົງທຶນ
ກົມ ແຜນການ
ເລກທີ 2685
ລົງວັນທີ 3.8.12

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 089 /ສພຊ

ມະຕິຕົກລົງ
ຂອງ
ສະພາແຫ່ງຊາດ ແຫ່ງ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ດຳເນີນໃນລະຫວ່າງ ວັນທີ 20 ມິຖຸນາ ຫາ ວັນທີ 13 ກໍລະກົດ 2012, ມີສະມາຊິກສະພາແຫ່ງຊາດເຂົ້າຮ່ວມທັງໝົດ ຈຳນວນ 127 ທ່ານ, ຍິງ 31 ທ່ານ.

ກະຊວງແຜນການ ແລະ ການລົງທຶນ

ຜ່ານການຟັງລາຍງານ ແລະເສີມຂະຫຍາຍສິດປະຊາທິປະໄຕຢ່າງກວ້າງຂວາງບັນຫາຕ່າງໆ ໃນການຄົ້ນຄວ້າ, ພິຈາລະນາ. ກອງປະຊຸມໄດ້ຕົກລົງບັນຫາສຳຄັນຕ່າງໆດັ່ງນີ້:

I. ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2011-2012 ແລະທິດທາງ ສົກປີ 2012-2013.

ກອງປະຊຸມສະແດງຄວາມຊົມເຊີຍຕໍ່ລັດຖະບານທີ່ໄດ້ມີຄວາມພະຍາຍາມ ຊີ້ນຳ-ນຳພາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2011-2012, ເຖິງວ່າສະພາບແວດລ້ອມເສດຖະກິດ-ການເງິນຂອງໂລກ ແລະ ພາກພື້ນຍັງມີຄວາມສັບສົນ, ສະພາບການຜະລິດພາຍໃນຍັງບໍ່ທັນແຂງແຮງ, ລາຄານ້ຳມັນມີການເໜັງຕີງ, ຫຼາຍແຂວງປະສົບກັບໄພທຳມະຊາດ ແຕ່ເສດຖະກິດແຫ່ງຊາດ ກໍ່ຍັງສືບຕໍ່ຂະຫຍາຍຕົວໄປຕາມທ່ອທີ່ໄດ້ກຳນົດໄວ້ໃນແຜນການ 5 ປີ, ພື້ນຖານໂຄງລ່າງສືບຕໍ່ໄດ້ຮັບການພັດທະນາ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໄດ້ຮັບການປັບປຸງໃຫ້ສູງຂຶ້ນເປັນກ້າວໆ, ສະຖຽນລະພາບທາງດ້ານການເມືອງມີຄວາມໜັກແໜ້ນ ແລະຄວາມເປັນລະບຽບຮຽບຮ້ອຍທາງດ້ານສັງຄົມດີຂຶ້ນກວ່າເກົ່າ ເຊິ່ງສະແດງອອກດັ່ງນີ້:

+ ການປະຕິບັດຄາດໝາຍເສດຖະກິດມະຫາພາກ:

ໃນ 6 ເດືອນຕົ້ນປີ 2011-2012 ຍອດຜະລິດຕະພັນພາຍໃນບັນລຸໄດ້ 70.600 ຕື້ກີບ ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນປະມານ 8%, ລາຍໄດ້ສະເລ່ຍ 1.355 ໂດລາສະຫະລັດຕໍ່ຄົນຕໍ່ປີ.

- ຂະແໜງກະສິກຳ-ປ່າໄມ້ເພີ່ມຂຶ້ນປະມານ 2,7%;
- ຂະແໜງອຸດສາຫະກຳເພີ່ມຂຶ້ນປະມານ 13,5%;
- ຂະແໜງການບໍລິການເພີ່ມຂຶ້ນປະມານ 8,1%;
- ອັດຕາເງິນເຟີ້ໃນ 8 ເດືອນຕົ້ນສົກປີສະເລ່ຍ 6,07%;
- ປະລິມານ M2 ເພີ່ມຂຶ້ນ 15% ທຽບໃສ່ເດືອນ 9/2011.

+ ສະພາບການລົງທຶນໃນ 6 ເດືອນຕົ້ນສົກປີ

- ການລົງທຶນຂອງລັດທັງໝົດ 2.100 ໂຄງການ, ມູນຄ່າ 1.121,26 ຕື້ກີບເທົ່າກັບ 14,2% ຂອງແຜນການປີ;
- ການລົງທຶນເອກະຊົນພາຍໃນ ແລະຕ່າງປະເທດທັງໝົດ 98 ໂຄງການມູນຄ່າ 2 ຕື້ໂດລາສະຫະລັດ ລື່ນແຜນການ 31%.

ຄຽງຄູ່ກັນນັ້ນ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມສົກປີ 2011-2012 ກອງປະຊຸມໄດ້ໃຫ້ທັດສະນະວ່າ ສປປ ລາວ ຍັງປະເຊີນກັບຄວາມຫຍຸ້ງຍາກຫລາຍປະການ ເຊິ່ງເກີດມາຈາກວິກິດການເສດຖະກິດພາຍນອກ, ດິນຟ້າອາກາດມີການປ່ຽນແປງເກີດມີໄພທຳມະຊາດ, ການຄຸ້ມຄອງລັດບາງດ້ານຍັງບໍ່ມີຄຸນນະພາບຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດຄາດໝາຍເສດຖະກິດຈຳນວນໜຶ່ງບໍ່ໄດ້ຕາມຄາດໝາຍ ເປັນຕົ້ນ ແມ່ນການຜະລິດເຂົ້າ; ຍັງມີຄອບຄົວທຸກຍາກ; ການແກ້ໄຂບັນຫາດ້ານການສຶກສາ ແລະສາທາລະນະສຸກຍັງຊັກຊ້າ, ອັດຕາການຕາຍຂອງເດັກລຸ່ມ 5 ປີ ແລະ ອັດຕາການຕາຍຂອງແມ່ຍັງຢູ່ໃນລະດັບສູງ, ປະກົດການຫຍໍ້ທໍ້ໃນສັງຄົມໂດຍສະເພາະບັນຫາຢາເສບຕິດ, ການຄ້າຂາຍແບບຜິດກົດໝາຍ, ຂໍ້ຂັດແຍ້ງທີ່ດິນ, ການຄຸ້ມຄອງປ່າໄມ້, ການເຊື່ອມຖອຍດ້ານຄຸນສົມບັດສິນທຳ ຍັງເປັນສິ່ງທ້າທາຍຕໍ່ການພັດທະນາເສດຖະກິດ-ສັງຄົມຂອງປະເທດ.

ກອງປະຊຸມເປັນເອກະພາບຕໍ່ຄາດໝາຍສູ້ຊົນທາງດ້ານມະຫາພາກທີ່ລັດຖະບານໄດ້ວາງອອກ ແລະເຫັນດີຮັບຮອງເອົາບັນຫາຕ່າງໆດັ່ງນີ້:

+ ຄາດໝາຍດ້ານເສດຖະກິດ.

ອັດຕາການເຕີບໂຕລວມຍອດຜະລິດຕະພັນພາຍໃນເພີ່ມຂຶ້ນ 8,3% (ມູນຄ່າຂອງ GDP 80.720 ຕື້ກີບ) ໃນນັ້ນ:

- ຂະແໜງກະສິກຳເພີ່ມຂຶ້ນ 3,3% ກວມເອົາ 25,9%;
- ຂະແໜງອຸດສາຫະກຳເພີ່ມຂຶ້ນ 15,5% ກວມເອົາ 31,9%;
- ແໜງບໍລິການເພີ່ມຂຶ້ນ 7% ກວມເອົາ 37,3%
- ພາສີຂາເຂົ້າ ເພີ່ມຂຶ້ນ 4,2% ກວມເອົາ 5,8% ຂອງ GDP.

+ ຄາດໝາຍດ້ານສັງຄົມ.

1. ດ້ານສຶກສາ.

- ສົ່ງເສີມໃຫ້ເດັກນ້ອຍເກນອາຍຸເຂົ້າຮຽນກຸ່ມປະຖົມໃຫ້ບັນລຸໄດ້ 32%;
- ອັດຕາເຂົ້າຮຽນສຸດທີຊັ້ນປະຖົມສຶກສາໃຫ້ບັນລຸໄດ້ 96,1%;
- ຫັນໂຮງຮຽນມູນລະປະຖົມເປັນໂຮງຮຽນປະຖົມສົມບູນ ໃຫ້ກວມ 75%;

- ເພີ່ມອັດຕາລອດເຫຼືອຊັ້ນປະຖົມໃຫ້ໄດ້ 78,6%;
- ອັດຕາເລື່ອນຊັ້ນໃຫ້ບັນລຸໄດ້ 87,6%;
- ຫລຸດອັດຕາປະລະການຮຽນໃຫ້ບັນລຸໄດ້ 5,5%;
- ຫຼຸດອັດຕາຄ້າງຫ້ອງລົງໃຫ້ໄດ້ 7%;
- ດັດສະນີເຂົ້າຮຽນລະຫ່ວາງ ຍິງ-ຊາຍໃຫ້ໄດ້ 0,98

2. ດ້ານສາທາລະນະສຸກ

- ສູ້ຊົນຫລຸດອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ມີນ້ຳໜັກ ຕ່ຳກວ່າ ມາດຕະຖານ ໃຫ້ຢູ່ໃນລະດັບ 23% ແລະ ອັດຕາສ່ວນເດັກເຕ້ຍ ໃຫ້ຢູ່ໃນລະດັບ 37 %;
- ອັດຕາສ່ວນການຕາຍ ຂອງເດັກລຸ່ມ 5 ປີ ໃຫ້ຍັງເຫຼືອ 71/1.000 ຕໍ່ການເກີດ, ອັດຕາການຕາຍຂອງ ເດັກ ລຸ່ມ 1 ປີ ໃຫ້ໄດ້ 55/1.000 ຕໍ່ການເກີດມີຊີວິດ;
- ອັດຕາການຕາຍຂອງແມ່ໃຫ້ຢູ່ໃນລະດັບ 290/100.000, ອັດຕາການເກີດ ໂດຍມີແພດຜູ້ຊຳນານ ຊ່ວຍເກີດໃຫ້ໄດ້ 45%;
- ອັດຕາການຕິດເຊື້ອ ເອັສໄອວີ(HIV) ໃນປະຊາກອນທົ່ວໄປໃຫ້ຢູ່ໃນລະດັບ 0,4%, ອັດຕາການຕາຍ ຍ້ອນໄຂ້ຍຸງ 0,20%, ອັດຕາການເປັນວັນນະໂລກ ໃຫ້ໃຫ້ຢູ່ໃນລະດັບ 130 ຕໍ່ປະຊາກອນ 100.000ຄົນ;
- ອັດຕາສ່ວນປະຊາກອນຊົມໃຊ້ນ້ຳສະອາດໃຫ້ໄດ້ 81,9% ແລະອັດຕາສ່ວນປະຊາກອນຊົມໃຊ້ວິດ ຖ່າຍໃຫ້ໄດ້ 59,3%;
- ຄ້ຳປະກັນສຸຂະພາບໃຫ້ທົ່ວເຖິງທຸກແຂວງ ແລະ ກວມໃຫ້ໄດ້ 40% ຂອງປະຊາຊົນໃນເມືອງເປົ້າໝາຍ;
- ອັດຕາສ່ວນການວາງແຜນລູກຫ່າງ ບໍ່ໃຫ້ຫຼຸດ 48,8%.

3. ດ້ານລຶບລ້າງຄວາມທຸກຍາກ

- ອັດຕາຄົນທຸກຍາກຫລຸດລົງໃຫ້ຍັງເຫລືອ 20% ຂອງປະຊາກອນທັງໝົດ, ອັດຕາຄົວເຮືອນທຸກຍາກ ຫລຸດລົງໃຫ້ຍັງເຫລືອ 14% ຂອງຄົວເຮືອນທັງໝົດທົ່ວປະເທດ; ຢຸດຕິການເຄື່ອນຍ້າຍຊະຊາຍຂອງປະ ຊາຊົນ ໂດຍໃຫ້ມີການ**ຈັດສັນ**ພູມລຳເນົາ ແລະບ່ອນທຳມາຫາກິນຖາວອນໃນລະດັບສູນກາງ ແລະທ້ອງ ຖິ່ນ.

ນອກຈາກນັ້ນດາມາດຕະການ ທີ່ລັດຖະບານກຳນົດອອກແລ້ວ, ສະພາແຫ່ງຊາດ ສະເໜີໃຫ້ລັດຖະບານ ເອົາໃຈໃສ່ເພີ່ມເຕີມດັ່ງນີ້:

1.ຄຸນນະພາບເສດຖະກິດມະຫາພາກ.

ສືບຕໍ່ປັບປຸງຄຸນນະພາບການເຕີບໂຕຂອງເສດຖະກິດຕາມທິດຍືນຍົງ ແລະ ສົ່ງເສີມເສດຖະກິດພູມປັນຍາ, ສົ່ງເສີມການສ້າງມູນຄ່າເພີ່ມ ຂອງການສົ່ງອອກຕິດພັນກັບການສ້າງວຽກເຮັດງານທຳຢ່າງກວ້າງຂວາງໃນສັງຄົມ, ສ້າງສີມືແຮງງານທີ່ມີຄຸນນະພາບ ທັງປັບປຸງຄວາມສາມາດແຂ່ງຂັນຂອງເສດຖະກິດແຫ່ງຊາດ ໃນການເຊື່ອມໂຍງ ເສດຖະກິດກັບພາກພື້ນ ແລະສາກົນ.

ເພື່ອເຮັດໃຫ້ເສດຖະກິດແຫ່ງຊາດເຕີບໂຕຢ່າງໝັ້ນທ່ຽງ ແລະບັນລຸຄາດໝາຍທີ່ວາງໄວ້, ສະເໜີໃຫ້ລັດຖະ ບານເອົາໃຈໃສ່ປະຕິບັດບັນດາມາດຕະການການເງິນ-ເງິນຕາໃຫ້ມີຄວາມຢືດຢຸ່ນ ລະມັດລະວັງ ແລະຮອບຄອບ

ເປັນຕົ້ນການບໍລິຫານການຄວບຄຸມການເພີ້ມຂຶ້ນບໍລິມາດເງິນ M2, ການຂາດດຸນງົບປະມານ ແລະ ການຂາດດຸນການຄ້າ.

2. ການພັດທະນາຊົນນະບົດ ແລະແກ້ໄຂຄວາມທຸກຍາກ.

ສືບຕໍ່ເອົາໃຈໃສ່ສຸມທຶນຮອນເປັນພິເສດໃສ່ 64 ຈຸດສຸມບູລິມະສິດຂອງສູນກາງ ແລະ ທ້ອງຖິ່ນ ແລະ 167 ຈຸດຈັດສັນພູມລຳເນົາ ແລະບ່ອນທຳມາຫາກິນຖາວອນໃຫ້ປະຊາຊົນ ຕາມມະຕິກອງປະຊຸມ ໃຫຍ່ຄັ້ງທີ IX ຂອງ ພັກ ແລະ ແຜນການ 5 ປີ ຄັ້ງທີ VII ຂອງລັດຖະບານ ໃຫ້ມີການຫັນປ່ຽນຢ່າງຕັ້ງໜ້າ ແລະ ເປັນຮູບປະທຳ. ເປັນຕົ້ນແມ່ນເຂດທີ່ໝັ້ນຂອງການປະຕິວັດໃນເມື່ອກ່ອນ,ຈັດຕັ້ງທົດລອງຢູ່ 51 ເມືອງທຸກຍາກຕາມ ມະຕິເລກທີ 03 /ກມສພ, ລົງວັນທີ 15 ກຸມພາ 2012 ຂອງກົມການເມືອງສູນກາງພັກ ວ່າດ້ວຍການສ້າງແຂວງເປັນຫົວໜ່ວຍຍຸດ ທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ, ເອົາໃຈໃສ່ສ້າງນິຕິ ກຳທີ່ຈຳເປັນເພື່ອຮັບປະກັນໃນການແບ່ງຂັ້ນຄຸ້ມຄອງລະຫວ່າງສູນກາງ ແລະທ້ອງຖິ່ນໃຫ້ຊັດເຈນ ພ້ອມດຽວກັນນີ້ ສຸມພະນັກງານ ແລະທຶນຮອນລົງສູ່ຮາກຖານ. ປະສານສົມທົບໃນການສ້າງແຜນງານ, ໂຄງການ ແລະແຜນງົບປະ ມານຄວນໃຫ້ມີການລວມສູນຢູ່ຄະນະພັດທະນາຊົນນະບົດ ແລະລຶບລ້າງຄວາມທຸກຍາກຂັ້ນສູນກາງ ເພື່ອຮັບປະ ກັນຄວາມເປັນເອກະພາບ ແລະສອດຄ່ອງກັບແຜນພັດທະນາລວມຂອງທົ່ວປະເທດ.

ສະເໜີໃຫ້ລັດຖະບານຄົ້ນຄວ້າບ່ອນຈັດສັນພູມລຳເນົາ ແລະບ່ອນທຳມາຫາກິນໃຫ້ປະຊາຊົນບັນດາເຜົ່າ ເປັນຂອງລັດຖະບານ ຫຼື ຂອງສູນກາງ 1-2 ຈຸດຕື່ມ ເພື່ອຮັບຮອງເອົາປະຊາຊົນຈາກທ້ອງຖິ່ນ ເຊັ່ນ: ແຂວງຫົວພັນ, ແຂວງຫຼວງພະບາງ, ແຂວງຜົ້ງສາລີ ແລະແຂວງອື່ນໆທີ່ບໍ່ສາມາດຈັດສັນຢູ່ພາຍໃນທ້ອງຖິ່ນຕົນເອງໄດ້.

3. ນະໂຍບາຍສົ່ງເສີມການຜະລິດເປັນສິນຄ້າ.

ສະເໜີລັດຖະບານຊີ້ນຳກະຊວງ ແລະອົງການກ່ຽວຂ້ອງ ປະເມີນຄືນການຈັດຕັ້ງປະຕິບັດນະໂຍບາຍສົ່ງ ເສີມການຜະລິດສິນຄ້າ, ກຳນົດແຜນຍຸດທະສາດການຜະລິດເປັນສິນຄ້າ, ຍຸດທະສາດການຜະລິດກະສິກຳ, ຍຸດ ທະສາດດ້ານທຶນ; ການຕະຫລາດ ເອົາໃຈໃສ່ປະຕິບັດນະໂຍບາຍຄຸ້ມຄອງສິນຄ້າ-ລາຄາໂດຍສະເພາະລາຄາສິນ ຄ້າສະບຽງອາຫານ ແລະ ສິນຄ້າທີ່ຈຳເປັນໃນຊີວິດປະຈຳວັນ, ນະໂຍບາຍການສ້າງຄັງແຮສະບຽງອາຫານ. ຕັ້ງ ໜ້າປະຕິບັດນະໂຍບາຍສົ່ງເສີມພາກເອກະຊົນເຂົ້າໄປລົງທຶນດຳເນີນການຜະລິດເປັນສິນຄ້າ ຢູ່ໃນບັນດາຈຸດສຸມ ພັດທະນາດ້ວຍການວາງນະໂຍບາຍສົ່ງເສີມດ້ານພາສີ-ອາກອນ ແລະ ສິນເຊື່ອ.

ພ້ອມກັນນັ້ນ ໃຫ້ລັດຖະບານຊີ້ນຳຜູ້ປະກອບການພາຍໃນ ແລະ ຕ່າງປະເທດຊຶ່ງໄປລົງທຶນໃນແຕ່ລະທ້ອງ ຖິ່ນ ຕ້ອງຊຸກຍູ້ສົ່ງເສີມການຜະລິດ ລວມທັງການຈຳໜ່າຍສິນຄ້າຂອງປະຊາຊົນໃນທ້ອງຖິ່ນ ລວມທັງການສົ່ງເສີມ ການນຳໃຊ້ເຕັກນິກເຂົ້າໃນການປູກ-ການລ້ຽງ ເພື່ອສ້າງລາຍໄດ້ໃຫ້ແກ່ຊຸມຊົນ ດ້ວຍການຈັດຕັ້ງກຸ່ມການຜະລິດ ຂອງປະຊາຊົນໃນເຂດດັ່ງກ່າວ.

4. ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ.

ສະເໜີໃຫ້ລັດຖະບານ ຊຸກຍູ້ຊີ້ນຳກະຊວງທີ່ກ່ຽວຂ້ອງ ເລັ່ງສ້າງແຜນນະໂຍບາຍຄຸ້ມຄອງ ແລະ ນຳໃຊ້ຊັບ ພະຍາກອນທຳມະຊາດ, ນະໂຍບາຍທີ່ດິນແຫ່ງຊາດ ແລະ ແຜນແມ່ບົດຈັດສັນນຳໃຊ້ທີ່ດິນໃຫ້ສຳເລັດ ເພື່ອເປັນ ບ່ອນອີງໃນການຄຸ້ມຄອງ, ຈັດສັນ ແລະ ນຳໃຊ້ທີ່ດິນ, ບໍ່ແຮ່ ແລະ ກຳນົດເຂດພັດທະນາໂຄງການໃຫ້ຈະແຈ້ງ, ຈຳ

ກັດການສວຍໃຊ້ຊ່ອງຫວ່າງເພື່ອຈັບຈອງທີ່ດິນ ແລະ ຊັບພະຍາກອນທຳມະຊາດອື່ນຢ່າງຜິດກົດໝາຍ ທັງເປັນຂໍ້ມູນປັບປຸງກົດໝາຍ ວ່າດ້ວຍທີ່ດິນ ແລະກົດໝາຍອື່ນທີ່ກ່ຽວຂ້ອງ; ເພີ່ມທະວີການຊີ້ນຳກະຊວງສົມທົບກັບອົງການປົກຄອງທ້ອງຖິ່ນກວດກາການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສິ່ງແວດລ້ອມ ແລະກົດໝາຍອື່ນກ່ຽວ ຂ້ອງໃນບັນດາໂຄງການຂຸດຄົ້ນແຮ່ທາດ , ໂຄງການສຳປະທານທີ່ດິນ, ໂຄງການຂະໜາດໃຫຍ່ ໃນຂະແໜງການອື່ນໆທີ່ໄດ້ຮັບອະນຸຍາດໃຫ້ມີການປະເມີນຜົນ ແລະມີມາດຕະການແກ້ໄຂຜົນກະທົບທາງດ້ານສິ່ງແວດລ້ອມທຳມະຊາດ, ສຸຂະພາບຂອງປະຊາຊົນ ໃນບັນດາໂຄງການດັ່ງກ່າວຢ່າງເຂັ້ມງວດ ແລະ ທັນການ.

5. **ການລົງທຶນຂອງລັດ:**

ສະເໜີລັດຖະບານ ສ້າງນິຕິກຳລຸ່ມກົດໝາຍເພື່ອຄຸ້ມຄອງໂຄງການບູລິມະສິດ, ໂຄງການທີ່ມີຄວາມຈຳເປັນຮີບດ່ວນ ຊຶ່ງຂະແໜງການ ແລະທ້ອງຖິ່ນມີຄວາມຈຳເປັນຕ້ອງໄດ້ປະຕິບັດກ່ອນໃນກໍລະນີມີໄພທຳມະຊາດ ແລະເຫດການສຸກເສີນຕ່າງໆ ພ້ອມທັງມີກົນໄກໃນການນຳສະເໜີໂຄງການດັ່ງກ່າວ ມາຍັງຄະນະປະຈຳສະພາແຫ່ງຊາດ ພິຈາລະນາ ຫລືນຳສະເໜີດັດແກ້ເຂົ້າໃນແຜນງົບປະມານແຫ່ງລັດປະຈຳສົກປີຕາມລະບຽບການ.

6. **ຂົງເຂດວັດທະນະທຳ-ສັງຄົມ**

+ ສືບຕໍ່ຂະຫຍາຍຕາໜ່າງການສຶກສາຂັ້ນພື້ນຖານໄປສູ່ເຂດຊົນນະບົດ ແລະຫ່າງໄກສອກຫລີກໃຫ້ທົ່ວເຖິງ, ປຸກສ້າງ ແລະປັບປຸງບັນດາໂຮງຮຽນທີ່ບໍ່ໄດ້ມາດຕະຖານ; ສ້າງຕັ້ງຄະນະພັດທະນາການສຶກສາຂັ້ນບ້ານ ໃຫ້ຄົບທຸກບ້ານໃນທົ່ວປະເທດ; ສືບຕໍ່ສ້າງ ແລະບຳລຸງຄູອະນຸບານ, ປະຖົມ, ຄູສອນການສຶກສານອກໂຮງຮຽນ, ມັດທະຍົມຕອນຕົ້ນ, ມັດທະຍົມຕອນປາຍຕາມຄວາມຮຽກຮ້ອງຕ້ອງການໂດຍສະເພາະເຂດຈຸດສຸມໃນການພັດທະນາ, ເອົາໃຈໃສ່ປະຕິບັດນະໂຍບາຍດ້ານຕ່າງໆຕໍ່ຄູຜູ້ທີ່ໄປປະຕິບັດໜ້າທີ່ຢູ່ເຂດຊົນນະບົດຫ່າງໄກສອກຫລີກ, ສຸມໃສ່ການຈັດຕັ້ງປະຕິບັດແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ ໄລຍະທີ II ໂດຍເໜັ້ນໃສ່ດ້ານຄຸນນະພາບ ເພື່ອບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ແລະເປົ້າໝາຍແຜນງານການສຶກສາເພື່ອທຸກຄົນ.

+ ສະເໜີໃຫ້ລັດຖະບານເອົາໃຈໃສ່ຊີ້ນຳບັນດາຂະແໜງການ, ທ້ອງຖິ່ນ ໃຫ້ສຸມໃສ່ຈັດຕັ້ງປະຕິບັດຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 27/ນຍ, ລົງວັນທີ 5/10/2011 ວ່າດ້ວຍການເພີ່ມທະວີວຽກງານການສະກັດກັ້ນ ແລະແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ ເພື່ອສົ່ງເສີມ, ຮັກສາໄວ້ຮີດຄອງປະເພນີອັນດີງາມຂອງຊາດ. ພ້ອມກັນນັ້ນ ສືບຕໍ່ສຸມໃສ່ການພັດທະນາວຽກງານທ່ອງທ່ຽວໃຫ້ບັນລຸຕາມຄາດໝາຍທີ່ລັດຖະບານກຳນົດໄວ້.

+ ສະເໜີໃຫ້ລັດຖະບານ ຮີບຮ້ອນສ້າງແຜນການປະຕິຮູບຍຸດທະສາດດ້ານສາທາລະນະສຸກໃຫ້ສຳເລັດເພື່ອລາຍງານຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ; ເອົາໃຈໃສ່ສ້າງ ແລະປັບປຸງຖ້ຽຢາປະຈຳບ້ານ, ສຸກສາລາ, ໂຮງໝໍຂັ້ນເມືອງ ເພື່ອເຮັດໃຫ້ວຽກງານການບໍລິການດ້ານສາທາລະນະສຸກໃຫ້ກວ້າງຂວາງ ແລະທົ່ວເຖິງ ດ້ວຍການຕອບສະໜອງແພດ, ໝໍ, ປະກອບອຸປະກອນຮັບໃຊ້ການແພດທີ່ຈຳເປັນໃນການແກ້ໄຂບັນຫາກໍລະນີສຸກເສີນໃຫ້ໄດ້ໂດຍພື້ນຖານ, ສືບຕໍ່ປະຕິບັດນະໂຍບາຍການປິ່ນປົວບໍ່ເສຍຄ່າຕໍ່ແມ່ ແລະເດັກນ້ອຍ, ເອົາໃຈໃສ່ວຽກງານສຸກຂະສຶກສາໃຫ້ກວ້າງຂວາງແນໃສ່ຫຼຸດຜ່ອນການເຈັບເປັນ ແລະການຕາຍຂອງແມ່ ແລະເດັກນ້ອຍ.

ສະໜີໃຫ້ລັດຖະບານກໍຄືຂະແໜງການທີ່ກ່ຽວຂ້ອງ ສືບຕໍ່ຊີ້ນຳການພັດທະນາເສດຖະກິດ-ສັງຄົມ ໃຫ້ຕິດພັນກັບຄວາມໝັ້ນຄົງແຫ່ງຊາດ, ຕັ້ງໜ້າປັບປຸງ, ຍົກລະດັບຄຸນນະພາບໃນການສ້າງພັດທະນາສີມືແຮງງານຢູ່ບັນດາສູນຝຶກວິຊາຊີບຕ່າງໆ ເພື່ອສາມາດຕອບສະໜອງແຮງງານ ໃຫ້ສົມຄູ່ກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາ; ເພີ່ມທະວີການຄຸ້ມຄອງແຮງງານພາຍໃນ ແລະ ຕ່າງປະເທດໃຫ້ຖືກຕ້ອງຕາມລະບຽບກົດໝາຍ; ສືບຕໍ່ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ, ມີຄຸນງາມຄວາມດີຕໍ່ປະເທດຊາດ ໂດຍສະເພາະເປົ້າໝາຍ ຊຸມປີ 1954 ຄືນຫຼັງໃຫ້ສຳເລັດໃນປີ 2015 ແລະເປົ້າໝາຍອື່ນໆ ນັ້ນແກ້ໄຂນະໂຍບາຍໄດ້ໄວເທົ່າໃດກໍ່ຍິ່ງດີ.

II. ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ສົກປີ 2011-2012 ແລະທິດທາງແຜນການ ສົກປີ 2012-2013

ກອງປະຊຸມຊົມເຊີຍລັດຖະບານທີ່ໄດ້ປັບປຸງກົນໄກເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍໄດ້ດີ ຊຶ່ງສາມາດຮັບປະກັນການສະໜອງງົບປະມານເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ແລະ ວຽກງານປ້ອງກັນຊາດ ປ້ອງກັນຄວາມສະຫງົບໄດ້ໂດຍພື້ນຖານ.

ແຕ່ຄຽງຄູ່ກັນນັ້ນກໍຍັງມີບາງຂໍ້ຄົງຄ້າງຈຳນວນໜຶ່ງກ່ຽວກັບການຄຸ້ມຄອງລາຍຮັບຈາກເງິນຂາຍໄມ້, ລາຍຮັບວິຊາການ ແລະກອງທຶນຍັງບໍ່ທັນລວມສູນເຂົ້າໃນລະບົບງົບປະມານ, ການນຳໃຊ້ລະບົບບັນຊີຢູ່ບັນດາຫົວໜ່ວຍງົບປະມານຢູ່ສູນກາງ ແລະທ້ອງຖິ່ນຍັງບໍ່ທັນປະຕິບັດຢ່າງເຂັ້ມງວດ, ຕາມກົດໝາຍວ່າດ້ວຍການບັນຊີ; ຍັງມີສະພາບລະເມີດວິໄນການເງິນ ແລະມີປະກົດການຫຍໍ້ທໍ້ໃນຂົງເຂດຄັງເງິນແຫ່ງຊາດເຊິ່ງລັດຖະບານຈະຕ້ອງໄດ້ຊີ້ນຳທະຊວງການເງິນ ແລະຫົວໜ່ວຍງົບປະມານເອົາໃຈໃສ່ແກ້ໄຂຢ່າງເດັດຂາດ.

ກອງປະຊຸມເປັນເອກະພາບ ແລະ ຮັບຮອງບັນດາຄາດໝາຍສູ້ຊົນ ທີ່ກຳນົດໄວ້ໃນແຜນງົບປະມານແຫ່ງລັດສົກປີ 2012-2013, ຊຶ່ງກອງປະຊຸມສະພາແຫ່ງຊາດ ໄດ້ຄົ້ນຄວ້າສະເໜີໃຫ້ລັດຖະບານ ເພີ່ມລາຍຮັບພາຍໃນຈາກການສະເໜີເບື້ອງຕົ້ນ 17,19% ມາເປັນ 18,94% ຂອງ GDP; ລາຍລະອຽດງົບປະມານແຫ່ງລັດມີດັ່ງນີ້:

1. ລາຍຮັບງົບປະມານລວມ: 19.927 ຕື້ກີບ ໃນນັ້ນ: ລາຍຮັບພາຍໃນ: 15.289 ຕື້ກີບ ເທົ່າກັບ 18,94% ຂອງ GDP; ແຫລ່ງລາຍຮັບພາຍໃນມີດັ່ງນີ້:

- ລາຍຮັບສ່ວຍສາອາກອນ	7.696 ຕື້ກີບ.
- ລາຍຮັບຈາກພາສີ	4.260 ຕື້ກີບ.
- ລາຍຮັບຄຸ້ມຄອງການເງິນລັດວິສາຫະກິດ	1.008 ຕື້ກີບ.
- ລາຍຮັບຄຸ້ມຄອງຊັບສິນຂອງລັດ	1.575 ຕື້ກີບ.
- ລາຍຮັບຂາຍໄມ້	150 ຕື້ກີບ.
- ລາຍຮັບອື່ນໆ	600 ຕື້ກີບ.

2. ລາຍຈ່າຍງົບປະມານ: 23.964 ຕື້ກີບ ເທົ່າກັບ 29,69 % ຂອງ GDP ໃນນັ້ນ:

- ຈ່າຍລົງທຶນລວມ: 9.150 ຕື້ກີບ (ທຶນພາຍໃນ 2.950 ຕື້ກີບ ແລະລົງທຶນຕ່າງປະເທດເປັນ ໂຄງການ 6.200 ຕື້ກີບ).

- ຈ່າຍໃຫ້ຂະແໜງສຶກສາ ແລະ ກິລາ: 3.484 ຕື້ກີບ ເທົ່າກັບ 18,26 % ຂອງລາຍຈ່າຍລວມ.
- ຈ່າຍໃຫ້ຂະແໜງສາທາລະນະສຸກ: 1.683 ຕື້ກີບ ເທົ່າກັບ 8,82 % ຂອງລາຍຈ່າຍລວມ.
- ຈ່າຍຊຳລະໜີ້ລວມ: 4.257,8 ຕື້ກີບ.
- ຈ່າຍ ຄົ້ນຄວ້າວິທະຍາສາດ: 22 ຕື້ກີບ.
- ຈ່າຍລົງທຶນພັດທະນາຊົນນະບົດ ແລະແກ້ໄຂຄວາມທຸກຍາກ: 467,5 ຕື້ກີບ.
- ປະຕິບັດນະໂຍບາຍເພີ່ມເງິນເດືອນ ແລະເງິນອຸດໜູນພະນັກງານ ລັດຖະກອນປີ 2013-2015 ໃຫ້ເລີ່ມຈັດຕັ້ງປະຕິບັດ ໃນວັນທີ 01 ຕຸລາ 2012 ຕາມລຳດັບເລກທີ 221/ລບ ລົງວັນທີ 30/05/2012 ແລະນະໂຍບາຍເງິນເດືອນ ແລະເງິນອຸດໜູນຕໍ່ບາງຕຳແໜ່ງຂອງຄະນະສະມາຊິກສະພາແຫ່ງຊາດ ຕາມດຳລັດເລກທີ 155/ນຍ ລົງວັນທີ 12/03/2012.

3. ຂາດດຸນງົບປະມານ: 5 % ຂອງ GDP, ແຫລ່ງດຸນດ່ຽງງົບປະມານມີດັ່ງນີ້ :
- ກູ້ຢືມຈາກຕ່າງປະເທດ 1.742 ຕື້ກີບ ;
- ພັນທະບັດຄັງເງິນ 300 ຕື້ກີບ ;
- ພັນທະບັດລະດົມທຶນ 1.995 ຕື້ກີບ.

ນອກຈາກບັນດາມາດຕະການທີ່ ລັດຖະບານໄດ້ສະເໜີມານັ້ນ, ສະພາແຫ່ງຊາດສະເໜີລັດຖະບານ ຊີ້ນຳ-ນຳພາ ກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດມາດຕະການເພີ່ມເຕີມດັ່ງນີ້:
(1) ຊຸກຍູ້ເພີ່ມຖານລາຍຮັບ ຈາກພື້ນຖານການຜະລິດພາຍໃນໃຫ້ໜັກແໜ້ນ ເປັນຕົ້ນແມ່ນການສ້າງມູນຄ່າເພີ່ມ ຈາກຂະແໜງການປຸງແຕ່ງຜົນຜະລິດກະສິກຳ, ຊັບພະຍາກອນບໍ່ແຮ່ ແລະໄມ້.
(2) ເພີ່ມທະວີການຄຸ້ມຄອງລາຍຮັບ ແລະ ລາຍຈ່າຍງົບປະມານແຫ່ງລັດ ໃຫ້ໄປຕາມການຮັບຮອງຂອງສະພາແຫ່ງຊາດ; ເພີ່ມທະວີການຈັດຕັ້ງປະຕິບັດນະໂຍບາຍປະຢັດມັດທະຍັດແຫ່ງຊາດ ເພື່ອຕ້ານການຟຸມເຟືອຍທຸກຮູບແບບ; ຄົ້ນຄວ້າປັບປຸງນິຕິກຳຄຸ້ມຄອງລາຍຮັບ-ລາຍຈ່າຍວິຊາການຂອງບັນດາຂະແໜງການ ແລະທ້ອງຖິ່ນ ໃນນັ້ນ ໃຫ້ກຳນົດລະດັບເງິນແຮທີ່ຈຳເປັນຂອງຫົວໜ່ວຍງົບປະມານຕ່າງໆ ເພື່ອໃຫ້ມີຄວາມຄ່ອງຕົວຂຶ້ນກວ່າເກົ່າ ໃນການບໍລິຫານວຽກງານ ຂອງແຕ່ລະຂະແໜງການ ແລະທ້ອງຖິ່ນ.
(3) ເອົາໃຈໃສ່ ຊີ້ນຳ-ນຳພາ ແລະ ຊຸກຍູ້ ກະຊວງການເງິນ, ກະຊວງແຜນການ ແລະການລົງທຶນ ຮີບຮ້ອນສຳເລັດກຳນົດໝາຍ ການແບ່ງປັນງົບປະມານໃຫ້ຂະແໜງການ ແລະທ້ອງຖິ່ນ, ເອົາໃຈໃສ່ປະຕິບັດຕາມລະບຽບການນຳສະເໜີແຜນງົບປະມານແຫ່ງລັດ ຕໍ່ກອງປະຊຸມສະພາແຫ່ງຊາດ ໃຫ້ຄົບຖ້ວນຕາມເນື້ອໃນ ແລະທັນຕາມ ກຳນົດເວລາ ທີ່ກຳນົດໄວ້ໃນມາດຕາ 50 ແລະມາດຕາ 51 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ.
(4) ຊີ້ນຳ-ນຳພາ, ຊຸກຍູ້ຂະແໜງການເງິນ ແລະ ບັນດາຫົວໜ່ວຍງົບປະມານ ສືບຕໍ່ປັບປຸງລະບົບການບັນຊີຂອງຕົນ ໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍການບັນຊີ, ເອົາໃຈໃສ່ການສະຫລຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດປະຈຳສົກປີ ໃຫ້ໄດ້ຕາມກຳນົດເວລາທີ່ກົດໝາຍໄດ້ລະບຸໄວ້, ເພີ່ມທະວີການປະຕິບັດລະບຽບການຄຸ້ມຄອງການເງິນແຫ່ງລັດ ໃຫ້ຖືກຕ້ອງຕາມກົດໝາຍຢ່າງເຂັ້ມງວດ.

(5) ຊີ້ນຳ-ນຳພາ ແລະສູ້ຊົນຈັດຕັ້ງປະຕິບັດງົບປະມານແຫ່ງລັດໃຫ້ຂະແໜງການສຶກສາ ແລະສາທາລະນະສຸກ ໄປຕາມສັດສ່ວນທີ່ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຮັບຮອງເອົາ ໂດຍງົບປະມານໃຫ້ແກ່ຂະແໜງສຶກສາ ບໍ່ໃຫ້ຫລຸດ 17% ແລະ ຂະແໜງສາທາລະນະສຸກບໍ່ໃຫ້ຫລຸດ 9% ຂອງງົບປະມານລາຍຈ່າຍປະຈຳສົກປີ. ພ້ອມດຽວກັນນັ້ນ ສະເໜີໃຫ້ຂະແໜງການດັ່ງກ່າວເພີ່ມທະວີຄວາມຮັບຜິດຊອບ ແລະຄວາມເປັນເຈົ້າການໃນການປັບປຸງລະບົບການຄຸ້ມຄອງການເງິນຂອງຕົນໃຫ້ຖືກຕ້ອງຕາມລະບຽບກົດໝາຍ, ຮັບປະກັນການຈັດແບ່ງງົບປະມານດັ່ງກ່າວໃຫ້ລົງຮອດຫົວໜ່ວຍຮາກຖານ ຕາມມະຕິເລກທີ 03/ກມສພ, ລົງວັນທີ 15 ກຸມພາ 2012 ຂອງກົມການເມືອງສູນກາງພັກ.

(6) ຊີ້ນຳ-ນຳພາ, ຊຸກຍູ້ ກະຊວງການເງິນ ແລະກະຊວງແຜນການ ແລະການລົງທຶນ ອອກນິຕິກຳກ່ຽວກັບກົນໄກປະສານສົມທົບ ລະຫວ່າງຂະແໜງການ ແລະ ທ້ອງຖິ່ນ ໃນການຄຸ້ມຄອງການແກ້ໄຂໜີ້ສິນຂອງລັດຖະບານ ຮັບປະກັນໃຫ້ມີຄວາມເປັນເອກະພາບ, ຖືກຕ້ອງ ແລະ ເປັນທຳ ສຳລັບທຸກຫົວໜ່ວຍວິສາຫະກິດ ທີ່ນຳໃຊ້ງົບປະມານຂອງລັດ.

III. ວຽກງານຂອງອົງການກວດສອບແຫ່ງລັດ

ກ. ກອງປະຊຸມເຫັນດີເປັນເອກະພາບ ແລະຮັບຮອງເອົາບົດລາຍງານ ໃນການຈັດຕັ້ງປະຕິບັດວຽກງານໃນໄລຍະ 5 ປີ ທີ່ຜ່ານມາ (2006-2011) ແລະແຜນການ 5 ປີ ຕໍ່ໜ້າ ແລະເຫັນດີຮັບຮອງເອົາບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ສົກປີ 2009-2010 ຕາມການລາຍງານຂອງອົງການກວດສອບແຫ່ງລັດ.

ສຳລັບການເຄື່ອນໄຫວວຽກງານສົກປີ 2012-2013 ກອງປະຊຸມສະເໜີໃຫ້ອົງການກວດສອບແຫ່ງລັດເອົາໃຈໃສ່ດັ່ງນີ້ :

1. ກວດສອບບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດສົກປີ 2010-2011 ໃຫ້ທັນຕາມກຳນົດເວລາທີ່ແຜນການຂອງອົງການກວດສອບແຫ່ງລັດກຳນົດໄວ້;

2. ເອົາໃຈໃສ່ປະສານສົມທົບກັບກະຊວງການເງິນ ຜັນຂະຫຍາຍບົດຮຽນການກວດສອບຄັງເງິນຢູ່ນະຄອນຫຼວງວຽງຈັນໄປສູ່ຄັງເງິນຂອງບັນດາແຂວງໃນທົ່ວປະເທດ, ເອົາໃຈໃສ່ປັບປຸງລະບົບບັນຊີຂອງຄັງເງິນໃຫ້ເຂົ້າສູ່ລະບຽບການ, ໂປ່ງໃສ ແລະ ກວດສອບໄດ້.

ກອງປະຊຸມມອບໃຫ້ອົງການກວດສອບແຫ່ງລັດ ແລະ ກະຊວງການເງິນ ສືບຕໍ່ດຳເນີນການກວດກາຄືນເພື່ອຊອກຫາສາເຫດ ຂອງການຜິດດ່ຽງ ໃນການຍົກຍອດບັນຊີຈຳນວນ 94,83 ຕື້ກີບ ໃນສົກງົບປະມານ 2009-2010 ໃຫ້ແຈ້ງຂຶ້ນຕື່ມ ເພື່ອລາຍງານຄືນໃຫ້ຄະນະປະຈຳສະພາແຫ່ງຊາດຮັບຊາບໃນເວລາອັນຄວນ.

3. ສະເໜີໃຫ້ອົງການກວດສອບແຫ່ງລັດ ສົມທົບກັບກະຊວງການເງິນເພື່ອສືບຕໍ່ປັບປຸງຄືນລະບົບບັນຊີຄັງເງິນນະຄອນຫຼວງວຽງຈັນໃຫ້ຈະແຈ້ງຂຶ້ນຕື່ມ ແລ້ວລາຍງານຄືນໃຫ້ຄະນະປະຈຳສະພາແຫ່ງຊາດຮັບຊາບໃນເວລາອັນຄວນ.

ຂ. ການເລືອກຕັ້ງປະທານອົງການກວດສອບ: ກອງປະຊຸມເລືອກຕັ້ງເອົາທ່ານ ດຣ. ນາງວຽງທອງ ສີພັນດອນ ເປັນປະທານອົງການກວດສອບແຫ່ງລັດ ຜູ້ໃໝ່ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ.

IV. ການເຄື່ອນໄຫວວຽກງານຂອງອົງການຕຸລາການ ແລະຍຸຕິທຳ

ກອງປະຊຸມ ເຫັນດີຮັບຮອງເອົາບົດລາຍງານການເຄື່ອນໄຫວ ໃນສົກປີ 2011-2012 ແລະທິດທາງວຽກງານ ໃນສົກປີ 2012-2013 ຂອງອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ ແລະກະຊວງຍຸຕິທຳ ກ່ຽວກັບການປະຕິບັດຄຳຕັດສິນຂອງສານ.

ກອງປະຊຸມສະແດງຄວາມຊົມເຊີຍທີ່ໄດ້ຕັ້ງໜ້າເຄື່ອນໄຫວປະຕິບັດວຽກງານຂອງຕົນໄດ້ຮັບຜົນສຳເລັດໃນຫຼາຍດ້ານ ເປັນຕົ້ນ: ໄດ້ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງ ແລະພັດທະນາບຸກຄະລາກອນ ທາງດ້ານວິຊາສະເພາະ, ຄຸນທາດການເມືອງ ແລະຈັນຍາທຳຂອງນັກກົດໝາຍ ແນໃສ່ຮັບປະກັນຄວາມຍຸຕິທຳໃນສັງຄົມ.

ກອງປະຊຸມເຫັນດີເປັນເອກະພາບ ຕໍ່ທິດທາງວຽກງານຂອງອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ ແລະ ກະຊວງຍຸຕິທຳ ສົກປີ 2012-2013 ຊຶ່ງຈະສູ້ຊົນເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງໂດຍຕິດພັນກັບການປະຕິບັດມະຕິເລກທີ 03/ກມສພ ລົງວັນທີ15 ກຸມພາ 2012 ຂອງກົມການເມືອງສູນກາງພັກ ວ່າດ້ວຍການສ້າງແຂວງໃຫ້ເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະສ້າງບ້ານເປັນຫົວໜ່ວຍພັດທະນາ ຢູ່ໃນຂົງເຂດວຽກງານຂອງຕົນໃຫ້ປາກົດຜົນເປັນຈິງ. ພ້ອມກັນນີ້ກໍໃຫ້ເອົາໃຈໃສ່ພັດທະນາບຸກຄະລາກອນໃຫ້ເຂັ້ມແຂງໜັກແໜ້ນທາງດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ແລະຈັນຍາທຳຂອງພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ.

ນອກຈາກນັ້ນດ້ວຍມາດຕະການທີ່ອົງການກ່ຽວຂ້ອງໄດ້ກຳນົດອອກແລ້ວສະພາແຫ່ງຊາດ ສະເໜີແຕ່ລະອົງການເອົາໃຈໃສ່ ບັນຫາຈຳນວນໜຶ່ງດັ່ງນີ້:

1. ອົງການໄອຍະການປະຊາຊົນສູງສຸດ ຕ້ອງເພີ່ມທະວີບົດບາດການຕິດຕາມກວດກາການປະຕິບັດລັດຖະທຳມະນູນ ແລະ ກົດໝາຍຢູ່ໃນອົງການອຳນາດລັດໃຫ້ແຂງແຮງທົ່ວເຖິງກວ່າເກົ່າ ເພື່ອແນໃສ່ຍົກສູງສະຕິເຄົາລົບ ແລະປະຕິບັດກົດໝາຍໃຫ້ສູງຂຶ້ນ, ເອົາໃຈໃສ່ຄົ້ນຄວ້າຄະດີໃຫ້ຄົບຖ້ວນ, ຮອບດ້ານ, ພາວະວິໄສ ແລະສັ່ງຟ້ອງຂຶ້ນສານຢ່າງເຂັ້ມງວດ. ເອົາໃຈໃສ່ກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ, ຂອງເຈົ້າໜ້າທີ່ຄ້າຍຄຸມຂັງ-ດັດສ້າງ ແລະສະເໜີໃຫ້ກະຊວງກ່ຽວຂ້ອງຄວນສ້າງເປັນກົດໝາຍວ່າດ້ວຍຄ້າຍຄຸມຂັງດັດສ້າງສະເພາະ.

2. ສານປະຊາຊົນສູງສຸດ ຕ້ອງເອົາໃຈໃສ່ຍົກລະດັບຄວາມຮູ້ຄວາມສາມາດ ແລະຄຸນສົມບັດຂອງຜູ້ພິພາກສາໃຫ້ສູງຂຶ້ນຕື່ມ ເພື່ອຮັບປະກັນໃຫ້ການພິຈາລະນາຕັດສິນຄະດີໃຫ້ຖືກຕ້ອງ, ເປັນທຳ, ບໍ່ລຳອຽງ, ມີປະສິດທິພາບ ແລະສາມາດນຳເອົາຄຳຕັດສິນນັ້ນໄປຈັດຕັ້ງປະຕິບັດໄດ້. ລວມທັງເອົາໃຈໃສ່ກວດກາ ການເຄື່ອນໄຫວຂອງສານປະຊາຊົນຂັ້ນລຸ່ມ ໃນການຕັດສິນຄະດີໃຫ້ຖືກຕ້ອງຕາມກົດໝາຍ ແລະຄວາມເປັນຈິງ;

3. ກະຊວງຍຸຕິທຳ ຕ້ອງສູ້ຊົນປັບປຸງຫ້ອງການ ແລະໜ່ວຍງານປະຕິບັດຄຳຕັດສິນຂອງສານ ລວມທັງພະນັກງານໃຫ້ມີຄວາມໜັກແໜ້ນທາງດ້ານທັດສະນະການເມືອງ, ວິຊາສະເພາະ ແລະມີຄວາມເຂັ້ມງວດ, ຫຼີກເວັ້ນການລຳອຽງ, ເລືອກປະຕິບັດໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ເດັດຂາດແລ້ວ;

4. ກະຊວງປ້ອງກັນຄວາມສະຫງົບ ຕ້ອງເອົາໃຈໃສ່ຊີ້ນຳ ການດຳເນີນການສືບສວນ-ສອບສວນໃຫ້ຖືກຕ້ອງຕາມຂັ້ນຕອນຂອງກົດໝາຍ, ຮັບປະກັນຄວາມຍຸຕິທຳ ແລະເຂັ້ມງວດຕໍ່ຜູ້ກະທຳຜິດ. ໄປຄຽງຄູ່ກັນນີ້ກໍໃຫ້ເອົາໃຈໃສ່ປັບປຸງກົນໄກການເກັບກຳຂໍ້ມູນຫລັກຖານ, ເພີ່ມອຸປະກອນ, ເຄື່ອງມືທີ່ທັນສະໄໝເພື່ອເຮັດໃຫ້ວຽກງານມີ

ຄວາມຊັດເຈນ ແລະທັນເວລາ.ເພີ່ມທະວີການປະສານສົມທົບຢ່າງໜັກແໜ້ນກົມກຽວລະຫວ່າງອົງການຕຸລະການ ເພື່ອແກ້ໄຂຄະດີທີ່ຄ້າງຄາແກ່ຍາວ ແລະມີຄວາມຫຍຸ້ງຍາກ ທັງຢູ່ສູນກາງ ແລະທ້ອງຖິ່ນໃຫ້ໄດ້ຫຼາຍກວ່າເກົ່າ.

V. <u>ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ</u>

ກອງປະຊຸມເຫັນດີຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານຂອງສະພາແຫ່ງຊາດ ແຕ່ກອງປະຊຸມຄັ້ງປະຖົມມະລຶກ ຫາກອງປະຊຸມສະໄໝສາມັນເທື່ອທີ 3 ແລະທິດທາງວຽກງານ ແຕ່ກອງປະຊຸມສະໄໝສາມັນເທື່ອທີ 03 ຫາກອງປະຊຸມສະໄໝສາມັນ ເທື່ອທີ 05 ຊຶ່ງສະເໜີໂດຍຄະນະປະຈຳສະພາແຫ່ງຊາດ.

ກອງປະຊຸມສະແດງຄວາມຊົມເຊີຍຕໍ່ຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ເອົາໃຈໃສ່ຊີ້ນຳການຈັດຕັ້ງປະຕິບັດວຽກງານຕ່າງໆ ເປັນຕົ້ນການປັບປຸງກົງຈັກການຈັດຕັ້ງ, ປັບປຸງລະບອບແບບແຜນວິທີເຮັດວຽກທັງສູນກາງ ແລະເຂດເລືອກຕັ້ງ, ຍົກລະດັບຄວາມຮູ້ຄວາມສາມາດໃຫ້ສະມາຊິກສະພາແຫ່ງຊາດ, ພະນັກງານ ແລະອື່ນໆ. ທັງໝົດເຫລົ່ານີ້ໄດ້ເປັນພື້ນຖານສຳຄັນໃນການເຮັດສຳເລັດໜ້າທີ່ ແລະ ວຽກງານກໍ່ຄືພາລະບົດບາດຂອງ ສະພາແຫ່ງຊາດໃນ 1 ປີຜ່ານມາ.

ກອງປະຊຸມເຫັນດີຮັບຮອງເອົາທິດທາງວຽກງານຂອງສະພາແຫ່ງຊາດ ແຕ່ກອງປະຊຸມສະໄໝສາມັນເທື່ອທີ 3 ຫາກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ VII, ຊຶ່ງໄດ້ກຳນົດເປັນ 6 ວຽກງານໃຫຍ່, ມີ 17 ແຜນງານຈຸດສຸມ, ໃນນັ້ນຈະສູ້ຊົນປະຕິບັດຄາດໝາຍຈຳນວນໜຶ່ງເຊັ່ນ: ລົງເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງໃຫ້ໄດ້ຢ່າງໜ້ອຍ 480.000 ເທື່ອຄົນ, ແກ້ໄຂຄຳຮ້ອງຂໍຄວາມເປັນທຳໃຫ້ໄດ້ຫຼາຍຂຶ້ນ ແລະວ່ອງໄວກ່ວາເກົ່າ; ສູ້ຊົນສ້າງ ແລະປັບປຸງກົດໝາຍ ໃຫ້ສຳເລັດຢ່າງໜ້ອຍ 25 ສະບັບ; ຍົກສູງຄຸນນະພາບຂອງການພິຈາລະນາຕົກລົງບັນຫາສຳຄັນຂອງຊາດ; ເຄື່ອນໄຫວຕ່າງປະເທດຢ່າງມີຈຸດສຸມ, ສືບຕໍ່ປັບປຸງກົງຈັກການຈັດຕັ້ງ ແລະບຸກຄະລະກອນໃຫ້ໜັກແໜ້ນເຂັ້ມແຂງ, ສູ້ຊົນສ້າງສູນຝຶກອົບຮົມ ແລະສາມາດເຄື່ອນໄຫວໄດ້ຢ່າງມີປະສິດທິຜົນ.

ສຳລັບການຕິດຕາມກວດກາ, ກອງປະຊຸມມອບໃຫ້ຄະນະປະຈຳ, ກຳມາທິການ ແລະຄະນະສະມາຊິກສະພາແຫ່ງຊາດ ສ້າງແຜນງານໂຄງການເພື່ອດຳເນີນຕິດຕາກວດກາບັນຫາຕ່າງໆລຸ່ມນີ້:

1. ຕິດຕາມກວດກາບັນດາຄາດໝາຍທີ່ກຳນົດໃນແຜນພັດທະນາເສດຖະກິດ-ສັງຄົມ ແລະງົບປະມານແຫ່ງລັດ ສົກປີ 2012-2013, ບັນດາຄາດໝາຍຂອງເປົ້າໝາຍສະຫັດສະຫວັດ, 64 ຈຸດສຸມ ແລະ 167 ໂຄງການຈັດສັນພູມລຳເນົາ ແລະບ່ອນທຳມາຫາກິນຖາວອນໃຫ້ປະຊາຊົນ ແລະອື່ນໆທີ່ກອງປະຊຸມໄດ້ຮັບຮອງເອົາແລ້ວ.
2. ຕິດຕາມກວດກາການຄຸ້ມຄອງບໍລິຫານລັດຂັ້ນຕ່າງໆ ເປັນຕົ້ນການສ້າງແຜນແມ່ບົດຈັດສັນ ແລະຄຸ້ມຄອງທີ່ດິນ, ການອອກໃບຕາດິນ, ການແກ້ໄຂຄຳສະເໜີຂອງປະຊາຊົນກ່ຽວກັບທີ່ດິນທີ່ຕິດພັນກັບຜົນປະໂຫຍດລວມຂອງຊາດ ແລະຂອງປະຊາຊົນຈຳນວນຫລາຍ;
3. ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະກົດໝາຍ ໂດຍສຸມໃສ່ການແກ້ໄຂຄະດີແພ່ງທີ່ແກ່ຍາວມາດົນນານ ກ່ຽວກັບຂໍ້ຂັດແຍ່ງລະຫວ່າງບຸກຄົນກັບຄົນຈຳນວນຫຼາຍ ແລະການຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດເຫລົ່ານີ້ເປັນຕົ້ນ.

ກອງປະຊຸມສະແດງຄວາມຊົມເຊີຍສູນກາງແນວລາວສ້າງຊາດ ຕາງໜ້າໃຫ້ອົງການຈັດຕັ້ງມະຫາຊົນປະກອບຄຳຄິດຄຳເຫັນຕໍ່ການເຄື່ອນໄຫວຂອງສະພາແຫ່ງຊາດຊຶ່ງໄດ້ຍົກໃຫ້ເຫັນຜົນງານ,ບາງຂໍ້ຄົງຄ້າງ ແລະນຳເອົາ

ຂໍ້ສະເໜີຕ່າງໆຂອງບັນດາຊັ້ນຄົນໃນສັງຄົມມາສ່ອງແສງໃຫ້ສະພາແຫ່ງຊາດ ໄດ້ຮັບຊາບເພື່ອປັບປຸງການເຄື່ອນໄຫວຂອງຕົນໃຫ້ນັບມື້ດີຂຶ້ນ.

ກອງປະຊຸມເຫັນດີຮັບຮອງເອົາການເລືອກຕັ້ງສະມາຊິກສະພາແຫ່ງຊາດທົດແທນ ຢູ່ເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມມອບໃຫ້ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ກະກຽມ ແລະຈັດຕັ້ງປະຕິບັດຕາມຂັ້ນຕອນຂອງກົດໝາຍວ່າດ້ວຍ ການເລືອກຕັ້ງສະມາຊິກສະພາແຫ່ງຊາດຢ່າງເຂັ້ມງວດ ແລ້ວລາຍງານຜົນສຳເລັດຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VII.

VI. ການສ້າງ ແລະປັບປຸງກົດໝາຍ.

ກອງປະຊຸມໄດ້ພິຈາລະນາກົດໝາຍທັງໝົດ 8 ສະບັບ, ໃນນັ້ນ ເຫັນດີຮັບຮອງເອົາກົດໝາຍທັງໝົດ 7 ສະບັບ, ມີກົດໝາຍສ້າງໃໝ່ 2 ສະບັບຄື: ກົດໝາຍວ່າດ້ວຍການສົ່ງຜູ້ຮ້າຍຂ້າມແດນ, ກົດໝາຍວ່າດ້ວຍການສ້າງນິຕິກຳ ແລະມີກົດໝາຍສະບັບປັບປຸງ 5 ສະບັບຄື: ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ກົດໝາຍວ່າດ້ວຍການກວດສອບແຫ່ງລັດ, ກົດໝາຍວ່າດ້ວຍຊັບສິນຂອງລັດ ແລະກົດໝາຍວ່າດ້ວຍກິລາ-ການຍະກຳ.

ສຳລັບກົດໝາຍວ່າດ້ວຍກະສິກຳ ຊຶ່ງຜ່ານການປະກອບຄຳເຫັນຂອງກອງປະຊຸມແລ້ວນັ້ນ ສະເໜີໃຫ້ລັດຖະບານຊີ້ນຳພາກສ່ວນກ່ຽວຂ້ອງຮີບຮ້ອນປັບປຸງ ແລະສືບຕໍ່ນຳລົງໄປປຶກສາແລກປ່ຽນຄຳເຫັນຂອງສັງຄົມຕື່ມ ເພື່ອຮັບປະກັນໃຫ້ກົດໝາຍດັ່ງກ່າວມີຄຸນນະພາບ.

VII. ມາດຕະການຈັດຕັ້ງປະຕິບັດ.

1. ກອງປະຊຸມມອບໃຫ້ຄະນະປະຈຳສະພາແຫ່ງຊາດ, ລັດຖະບານ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ ແລະອົງການກວດສອບແຫ່ງລັດຜັນຂະຫຍາຍເນື້ອໃນມະຕິຕົກລົງສະບັບນີ້ຕາມພາລະບົດ ບາດຂອງໃຜລາວ;

2. ກອງປະຊຸມມອບໃຫ້ຄະນະປະຈຳສະພາແຫ່ງຊາດ ຊີ້ນຳບັນດາອົງການຂອງສະພາແຫ່ງຊາດ ສົມທົບກັບພາກສ່ວນກ່ຽວຂ້ອງຈັດຕັ້ງປະຕິບັດມະຕິຕົກລົງຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ VII ໃຫ້ປະກົດຜົນເປັນຈິງ ແລະທັນເວລາ;

3. ມະຕິຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 13 / 07 / 1

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້